ໂຄງການເຊື່ອມໂຍງວຽກສິ່ງແວດລ້ອມເຂົ້າໃນການກິດຈະກຳຫຼຸດຜ່ອນຄວາມທຸກຍາກ (PEI) ຢູ່ ສປປ ລາວ

ບົດລາຍງານບັນຫາ 02/2010:

*ຕົວຊີ້ວັດວຽກງານຫຼຸດຜ່ອນຄວາມທຸກຍາກແລະການຄຸ້ມຄອງສິ່ງແວດລ້ອມສຳລັບການຕິດຕາມກວດກາແລະປະເມີນຜົນເປົ້າໝາຍການເຕີບໂຕແບບຍືນຍົງ**

ຊຸດບົດລາຍງານສະບັບຫຍໍ້ນີ້ ແມ່ນຖືກສ້າງຂຶ້ນໂດຍໂຄງການ PEI ຢູ່ ສປປ ລາວ ເພື່ອແກ້ໄຂບັນຫາຄວາມທຸກຍາກແລະບັນຫາສິ່ງແວດລ້ອມພາຍໃນຂະບວນການພັດທະນາແລະການວາງແຜນແຫ່ງຊາດໃນປະຈຸບັນ. ເປົ້າໝາຍຂອງບົດລາຍງານດັ່ງກ່າວ ແມ່ນເພື່ອສະໜອງຂໍ້ມູນຂ່າວສານທີ່ເປັນຫຼັກຖານຕົວຈິງ ຕະຫຼອດເຖິງຄຳແນະນຳດ້ານນະໂຍບາຍທີ່ສາມາດປະຕິບັດຕົວຈິງໄດ້ ເພື່ອຊ່ວຍການຫັນປ່ຽນເສດ ຖະກິດລາວໄປສູ່ເສັ້ນທາງການພັດທະນາແບບຍືນຍົງເພື່ອປະຊາຊົນຜູ້ທຸກຍາກ.

ບົດລາຍງານທີ່ຈັດພິມໃນໄລຍະຜ່ານມາລວມມີ:

01/2010: ການຫຼຸດຜ່ອນຄວາມທຸກຍາກ ແລະ ການຄຸ້ມຄອງສິ່ງແວດລ້ອມ: ເປົ້າໝາຍການພັດທະນາຮ່ວມເພື່ອການເຕີບໂຕແບບຍືນຍົງ

ສຳລັບບົດລາຍງານທີ່ຈະມີການຈັດພິມໃນອະນາຄົດ ແມ່ນຈະກ່າວເຖິງບັນຫາຕ່າງໆຄືດັ່ງຕໍ່ໄປນີ້ (ໃນຈຳນວນບັນຫາຕ່າງໆທີ່ມີ):

- ການລົງທຶນ ແລະ ການສ້າງຄວາມເຂັ້ມແຂງທາງດ້ານເສດຖະກິດໃຫ້ແກ່ແມ່ຍິງ

- ຜົນກະທົບທາງດ້ານເສດຖະກິດ, ສັງຄົມແລະສິ່ງແວດລ້ອມທີ່ເກີດຈາກຂະແໜງການລົງທຶນຕົ້ນຕໍ (ນ້ຳມັນເຊື້ອໄຟຊີວະພາບ, ການປູກຝັງ, ການຂຸດຄົ້ນບໍ່ແຮ່, ການຂຸດຄົ້ນໄມ້ ແລະ ປ່າໄມ້, ໄຟຟ້ານ້ຳຕົກ)

ບົດລາຍງານຫຍໍ້: ຄວາມທຸກຍາກຢູ່ ສປປ ລາວ ມີສາຍພົວພັນເຊື່ອມໂຍງຢ່າງໃກ້ຊິດກັບສະພາບເງື່ອນໄຂທາງສິ່ງແວດລ້ອມ. ປະຊາຊົນລາວຜູ້ທຸກຍາກສ່ວນໃຫຍ່ ດຳລົງຊີວິດຢູ່ຕາມເຂດຊົນນະບົດ ແລະ ເອື່ອຍອີງສິ່ງແວດລ້ອມທຳມະຊາດເພື່ອຕອບສະໜອງຄວາມຕ້ອງການປະຈຳວັນຂອງເຂົາເຈົ້າ.

ການເສື່ອມໂຊມຂອງສິ່ງແວດລ້ອມ ສາມາດເຮັດໃຫ້ຄວາມທຸກຍາກເພີ່ມຂຶ້ນຍ້ອນການສູນເສຍຊັບພະຍາກອນທຳມະຊາດ ແລະ ເຮັດໃຫ້ຄົນທຸກມີຄວາມສ່ຽງສູງຂຶ້ນ, ເຊິ່ງຄົນເຫຼົ່ານີ້ແມ່ນຜູ້ທີ່ມີຄວາມສາມາດຕ່ຳທີ່ສຸດໃນການຮັບມືກັບການເຊື່ອມໂຊມດັ່ງກ່າວ. ແຕ່ຄວາມທຸກຍາກ ຍັງສາມາດນຳໄປສູ່ບັນຫາການຂຸດຄົ້ນນຳໃຊ້ສິ່ງແວດລ້ອມຫຼາຍຈົນເກີນໄປ ເນື່ອງຈາກວ່າມີທາງເລືອກ ຫຼື ມີໂອກາດໜ້ອຍສຳລັບການກະຈາຍໃຫ້ມີຄວາມຫຼາກຫຼາຍ.

ບັນຫາຄວາມທຸກຍາກ-ສິ່ງແວດລ້ອມ ພົບວ່າ: ມີຄວາມຮ້າຍແຮງຂຶ້ນຢູ່ ສປປ ລາວ ເນື່ອງຈາກການຫຼັ່ງໄຫຼເຂົ້າມາຂອງການລົງທຶນ ແລະ ອັດຕາການຂຸດຄົ້ນຊັບພະຍາກອນທຳມະຊາດທີ່ຢູ່ໃນລະດັບສູງ ກຳລັງເພີ່ມຄວາມກົດດັນຕໍ່ຖານຊັບພະຍາກອນທຳມະຊາດ. ຂະບວນການພັດທະນາ ຈະຕ້ອງໄດ້ຮັບການຕິດ ຕາມ ແລະຄຸ້ມຄອງຢ່າງຮອບຄອບ ເພື່ອຫຼີກລ່ຽງຜົນກະທົບທີ່ບໍ່ຕ້ອງການ ແລະ ເພື່ອເຮັດໃຫ້ສາມາດມີການພັດທະນາແບບຍືນຍົງໃນໄລຍະຍາວ.

ຕົວຊີ້ວັດຄວາມທຸກຍາກ-ສິ່ງແວດລ້ອມ (PE) ຖືເປັນເຄື່ອງມືທີ່ສຳຄັນຍິ່ງໃນການຕິດຕາມກວດກາບັນດາກິດຈະກຳການພັດທະນາແລະປະເມີນຜົນຄວາມຄືບໜ້າເພື່ອກ້າວໄປສູ່ການບັນລຸບັນດາເປົ້າໝາຍທີ່ກຳ ນົດໄວ້ໃນແຜນພັດທະນາເສດຖະກິດ-ສັງຄົມຄັ້ງທີ 7. ຄຽງຄູ່ກັບຕົວຊີ້ວັດທາງດ້ານເສດຖະກິດ, ສັງຄົມ ຫຼື ສິ່ງແວດລ້ອມ, ບັນດາຕົວຊີ້ວັດເຫຼົ່ານີ້ ຈະສະໜອງໃຫ້ເຫັນພາບທີ່ຄົບຖ້ວນຮອບດ້ານກ່ຽວກັບຄວາມຢູ່ດີກິນດີຂອງຄົນໃນຊາດ ແລະ ຍັງສາມາດເປັນພື້ນຖານສຳຄັນໃຫ້ແກ່ການຕັດສິນບັນຫາແບບຍືນຍົງ.

1. ພາກສະເໜີ

ຄວາມທຸກຍາກຢູ່ ສປປ ລາວ ມີສາຍພົວພັນຍ່າງໃກ້ຊິດກັບສະພາບເງື່ອນໄຂທາງສິ່ງແວດລ້ອມ. ປະຊາຊົນລາວຜູ້ທຸກຍາກເປັນຈຳນວນຫຼາຍ ດຳລົງຊີວິດຢູ່ຕາມເຂດຊົນນະບົດ ແລະ ເອື່ອຍອີງສິ່ງແວດລ້ອມຕາມທຳມະຊາດ ເພື່ອຕອບສະໜອງຄວາມຕ້ອງການໃນການດຳລົງຊີວິດແລະການຫາລ້ຽງຊີບປະຈຳວັນຂອງເຂົາເຈົ້າ. ຄວາມອຸດົມຮັ່ງມີຂອງຊີວະນາໆພັນດ້ານກະສິກຳຢູ່ລາວ ຖືເປັນພື້ນຖານຂອງການສະໜອງສະບຽງອາຫານ ແລະ ຍັງອາດເປັນຊັບພະຍາກອນສຳຄັນໃນການເພີ່ມຄວາມຍືດຍຸ່ນທົນທານຕໍ່ການປ່ຽນແປງຂອງສະພາບດິນຟ້າອາກາດແລະການປ່ຽນແປງອື່ນໆ.

ການປະເມີນລະບົບນິເວດສະຫະສະວັດ[1] ໄດ້ລະບຸເອົາໄວ້ວ່າ "*ການເຊື່ອມ�โຊມຂອງບໍລິການລະບົບນິເວດ ກຳລັງສົ່ງຜົນຮ້າຍຕໍ່ປະຊາກອນໂລກຜູ້ທຸກຍາກທີ່ສຸດເປັນຈຳນວນຫຼວງຫຼາຍ ແລະ ບາງຄັ້ງບັນຫາດັ່ງກ່າວ ຍັງເປັນປັດໃຈຫຼັກທີ່ເປັນສາເຫດເຮັດໃຫ້ເກີດຄວາມທຸກຍາກ*". ການເຊື່ອມ�โຊມຂອງສິ່ງແວດລ້ອມ ສາມາດເຮັດໃຫ້ຄວາມທຸກຍາກເພີ່ມສູງຂຶ້ນຜ່ານທາງການສູນເສຍຊັບສິນບັດທາງທຳມະຊາດຄືທີ່ກ່າວມານັ້ນ ແລະ ເຮັດໃຫ້ຄວາມບໍ່ສາມາດປົກປ້ອງຕົນເອງໄດ້ຂອງຄົນທຸກຜູ້ທີ່ມີຊັບພະຍາກອນ ຫຼື ຄວາມສາມາດໜ້ອຍສຸດຢູ່ແລ້ວທີ່ຈະຮັບມືກັບບັນຫາການເຊື່ອມ�โຊມດັ່ງກ່າວ ນັ້ນມີເພີ່ມສູງຂຶ້ນໄປຕື່ມອີກ. ບໍ່ແມ່ນສະເພາະແຕ່ເລື່ອງການຫາລ້ຽງຊີບຂອງຄົນທຸກເທົ່ານັ້ນທີ່ໄດ້ຮັບຜົນກະທົບຈາກການເຊື່ອມ�โຊມທາງສິ່ງແວດລ້ອມ; ພົບເລື້ອຍໆວ່າ: ເຂົາເຈົ້າຍັງໄດ້ຮັບຜົນກະທົບຫຼາຍຈາກບັນຫານ້ຳບໍ່ສະອາດ, ມົນລະພິດທາງອາກາດ ແລະ ຄວາມສ່ຽງຕໍ່ອັນຕະລາຍຈາກທາດເບື່ອເຄມີ ນອກເໜືອຈາກອັນຕະລາຍອື່ນໆ.

ສາຍພົວພັນລະຫວ່າງຄວາມທຸກຍາກ-ສິ່ງແວດລ້ອມຢູ່ ສປປ ລາວ ປະຈຸບັນນີ້ ມີລັກສະນະຮ້າຍແຮງຂຶ້ນ ເນື່ອງຈາກການເຕີບ�โຕທີ່ວ່ອງໄວທາງເສດຖະກິດ ແລະ ອັດຕາການຂຸດຄົ້ນຊັບພະຍາກອນທຳມະຊາດທີ່ດຳເນີນໄປໃນຈັງຫວະທີ່ໄວວາ ໄດ້ເພີ່ມຄວາມກົດດັນຕໍ່ຖານຊັບພະຍາກອນທຳມະຊາດ. ຂະບວນການພັດທະນາ ຈະຕ້ອງໄດ້ຮັບການຕິດຕາມກວດກາແລະຄຸ້ມຄອງຢ່າງຮອບຄອບເພື່ອຫຼີກລ່ຽງຜົນກະທົບທາງສິ່ງແວດລ້ອມແລະສັງຄົມທີ່ບໍ່ປາຖະໜາ.

ສປປ ລາວ ໄດ້ບັນລຸການເຕີບ�โຕທີ່ພົ້ນເດັ່ນຕະຫຼອດທົດສະວັດທີ່ຜ່ານມາ ໂດຍການເຕີບ�โຕຂອງ DP ສະເລ່ຍຢູ່ທີ່ 6.4% ຕໍ່ປີໃນລະຫວ່າງປີ 2000 ຫາ 2006[2], ແລະ 7.7% ລະຫວ່າງປີ 2006 ຫາ 200 [3]. ການເຕີບ�โຕດັ່ງກ່າວນີ້ ໄດ້ໄປຄຽງຄູ່ກັບລະດັບຄວາມທຸກຍາກທີ່ຫຼຸດລົງເປັນຈຳນວນຫຼາຍຈາກ 46% ໃນປີ 1 2 ມາເປັນ 33% ໃນປີ 2003[4] ແລະ 27% ໃນປີ 2007[5], ແລະ ອັດຕາຄວາມທຸກຍາກລະຫວ່າງບັນດາແຂວງຕ່າງໆໄດ້ຍັບໃກ້ເຂົ້າກັນຫຼາຍຂຶ້ນ ໂດຍອັດຕາຄວາມທຸກຍາກຂັ້ນແຂວງສູງສຸດ ໄດ້ຫຼຸດລົງຈາກຫຼາຍກ່ວາ 70% ໃນປີ 1 3 ມາເປັນໂຕເລກທີ່ຕ່ຳກ່ວາ 55% ໃນປີ 2003[6]. ເຖິງຢ່າງໃດກໍ່ຕາມ, ສປປ ລາວ ຍັງຄົງເປັນໜຶ່ງໃນປະເທດທຸກຍາກກ່ວາປະເທດອື່ນໆໃນພາກພື້ນອາຊີຕາເວັນອອກສຽງໃຕ້ໂດຍມີ DP ຕໍ່ຫົວຄົນທີ່ $ 06 ອີງຕາມໂຕເລກປີ 200 [7]. ຍັງຄົງມີຄວາມແຕກໂຕນກັນຫຼາຍລະຫວ່າງຕົວເມືອງກັບຊົນນະບົດ ແລະ ລະຫວ່າງເຂດພູມສາດຕ່າງໆ ຄື: ຫຼາຍກ່ວາ 85% ຂອງຄົນທຸກ ແມ່ນດຳລົງຊີວິດຢູ່ເຂດຊົນນະບົດໂດຍໃນປີ 2003 ອັດຕາຄວາມທຸກຍາກຢູ່ຊົນນະບົດມີ�โຕເລກທີ່ 38% ເມື່ອສົມທຽບໃສ່ 20% ທີ່ພົບຢູ່ຕາມເຂດຕົວເມືອງ[8]. ອັດຕາຄວາມທຸກຍາກ ຍັງພົບວ່າມີຄວາມໜາແໜ້ນຢູ່ຕາມເຂດພູດອຍ ເຊິ່ງເປັນ ເຂດທີ່ມີທີ່ດິນໜ້ອຍຫຼາຍສຳລັບເຮັດການປູກຝັງ.

ຄວາມທຸກຍາກ (ຄືດັ່ງທີ່ໄດ້ສົນທະນາອ້າງອີງເປັນ�โຕເລກສະຖິຕິຂ້າງເທິງນັ້ນ) ຖືກນິຍາມເປັນການຊົມໃຊ້ ຫຼື ລາຍຈ່າຍທີ່ມີຕ່ຳກ່ວາລະດັບຕ່ຳສຸດ. ນີ້ເປັນຄ່າວັດແທກທີ່ກຳນົດທາງປະລິມານເຊິ່ງເປັນປະ�โຫຍດຕໍ່ການຕິດຕາມກວດກາເບິ່ງຄວາມຄືບໜ້າຕາມໄລຍະເວລາ ຫຼື ສຳລັບລະບຸຂົງເຂດພູມສາດເພື່ອສະໜອງກົດຈະກຳຊ່ວຍເຫຼືອທີ່ມີເປົ້າໝາຍແນ່ນອນ. ຄວາມທຸກຍາກ ຍັງສາມາດນິຍາມໄດ້ວ່າເປັນການຂາດບັນດາປັດໃຈພື້ນຖານ ເຊັ່ນ: ບັນຫາຄວາມບໍ່ພຽງພໍດ້ານສະບຽງອາຫານແລະເຄື່ອງນຸ່ງຫົ່ມ, ຂາດທີ່ຢູ່ອາໃສຖາວອນ, ແລະ ຄວາມບໍ່ສາມາດທີ່ຈະຕອບສະໜອງໄດ້ຕາມຄ່າໃຊ້ຈ່າຍດ້ານສາທາແລະສຶກສາ.

ສິ່ງແວດລ້ອມ ໃນທີ່ນີ້ແມ່ນເອົາຕາມຄຳນິຍາມສິ່ງແວດລ້ອມໃນຖານະເປັນອົງປະກອບລວມຂອງບັນດາລະບົບນິເວດ, ຕະຫຼອດເຖິງບໍລິການແລະຜະລິດຕະພັນຈາກບັນດາລະບົບນິເວດເຫຼົ່ານັ້ນຕາມທີ່ກຳນົດໄວ້ໃນການປະເມີນລະບົບນິເວດສະຫະສະວັດ. ອີງຕາມສະພາບເງື່ອນໄຂຂອງ ສປປ ລາວ, ສິ່ງແວດລ້ອມ ລວມເອົາປ່າໄມ້, ນ້ຳຈືດແລະບັນດາລະບົບນິເວດ

---

* ຮ່ວມຂຽນຂຶ້ນໂດຍ ແກຣສ໌ ວົງ - *Grace Wong,* ຊິເວຍ ຈັນທ໌ - *Silvia Jundt* ແລະ ຄົງເຮີ ເຮີຈາລິນ - *Kongher Herjalean* ຈາກໂຄງການ PEI ຢູ່ ສປປ ລາວ

[1] ການປະເມີນລະບົບນິເວດສະຫະສະວັດ, 2005. ບົດລາຍງານສັງລວມ. ການພັດທະນາສະຫະສະວັດ, WRI, ວໍຊິງຕັນ ດີຊີ - *Washington D.C.*

[2] ທະນາຄານໂລກ, 2008. ບົດລາຍງານການພັດທະນາໂລກ 2008. ທະນາຄານໂລກ, ວໍຊິງຕັນ ດີຊີ - *Washington D.C.*

[3] ກົມສະຖິຕິ, ກະຊວງແຜນການແລະການລົງທຶນ, ສປປ ລາວ.

[4] ການທົບທວນໄລຍະກາງແຜນຫ້າປີ - NSEDP, 2008. ກະຊວງແຜນການແລະການລົງທຶນ, ສປປ ລາວ.

[5] ເປົ້າໝາຍພັດທະນາສະຫະສະວັດ, 2008. ບົດລາຍງານໄລຍະກາງສຳລັບ ສປປ ລາວ.

[6] ການສຳຫຼວດລາຍຈ່າຍແລະການຊົມໃຊ້ຂອງຄົວເຮືອນລາວ 1 2/ 3 (LE S I) ແລະ 2002/2003 (LE S III), ກົມສະຖິຕິ, ກະຊວງແຜນການແລະການລົງທຶນ, ສປປ ລາວ.

[7] ກົມສະຖິຕິ, ກະຊວງແຜນການແລະການລົງທຶນ, ສປປ ລາວ.

[8] LE S III, ອັນດຽວກັບທີ່ກ່າວມາກ່ອນນັ້ນ.

ຂອງດິນບໍລິເວນນ້ຳ, ຊັບພະຍາກອນທຳມະຊາດທີ່ມີຢູ່ໃນລະບົບນິເວດ ເຫຼົ່ານັ້ນ (ຕົວຢ່າງ: ໄມ້ແລະເຄື່ອງປ່າຂອງດົງ, ສັດປ່າ, ປາ-ສັດນ້ຳ) ແລະ ບໍລິການລະບົບນິເວດທີ່ຖືກສ້າງຂຶ້ນ (ຕົວຢ່າງ: ການບັນເທົານ້ຳຖ້ວມ, ການຮັກສາໜ້າດິນ, ການກຳນົດລະບົບໄຫຼຂອງນ້ຳ).

ອີງຕາມການການປະເມີນຂໍ້ມູນທີ່ມີຢູ່, ການສຶກສາຂອງທະນາຄານໂລກ ໄດ້ລະບຸບັນຫາຕົ້ນຕໍດ້ານຄວາມທຸກຍາກ-ສິ່ງແວດລ້ອມທີ່ມີຢູ່ ສປປ ລາວ ຄືດັ່ງຕໍ່ໄປນີ້ ຕາມທີ່ສະແດງໄວ້ໃນຕາຕະລາງ 1 ຂ້າງລຸ່ມ. ການສຶກສາດັ່ງກ່າວ ສະແດງໃຫ້ຮູ້ວ່າ: ໂດຍທົ່ວໄປແລ້ວ, ຄົນທຸກ ມັກຖືກຍູ້ດັນໄປຫາເຂດດິນທີ່ບໍ່ອຸດົມສົມບູນ ຫຼື ເປັນເຂດດິນທີ່ມີລັກສະນະບໍ່ໝັ້ນຄົງ (ເຊັ່ນ: ດິນຕາມບໍລິເວນເຈີ້ຍພູ) ແລະ ເຂົາເຈົ້າຍັງຖືກຜົນກະທົບຫຼາຍຈາກມົນລະພິດທາງອາກາດໃນເຮືອນຍ້ອນການໃຊ້ຟືນ ແລະ ບັນຫາການຂາດສຸຂາພິບານ. ຄົນທຸກ ຍັງເບິ່ງຄືວ່າ: ໄດ້ຮັບຜົນກະທົບຫຼາຍໂດຍທຽບຖານຈາກບັນຫາການຂາດນ້ຳສະອາດ ແລະ ບັນຫາ ລນຕ ຕົກຄ້າງ ເຊິ່ງສ່ວນໃຫຍ່ແລ້ວພົບຢູ່ຕາມເຂດຊົນນະບົດ

ປ່ຽນແປງທີ່ມີຕໍ່ສຸຂະພາບຂອງສິ່ງແວດລ້ອມ ສາມາດສົ່ງຜົນກະທົບຫຼາຍຢ່າງຕໍ່ຄວາມທຸກຍາກ ແລະ ອາດຈະມີປັດໃຈຂັບເຄື່ອນຫຼາຍໂຕທີ່ເປັນສາເຫດເຮັດໃຫ້ມີການປ່ຽນແປງເຫຼົ່ານັ້ນ. ຂໍ້ມູນຂ່າວສານໃນລັກສະນະດັ່ງກ່າວ ມີຄວາມສຳຄັນຫຼາຍຕໍ່ການຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ຍຸດທະສາດຫຼຸດຜ່ອນຄວາມທຸກຍາກ.

ຕາຕະລາງ 1: ໂຕເລກປະເມີນຂອງປະຊາກອນຢູ່ ສປປ ລາວທີ່ໄດ້ຮັບຜົນກະທົບຈາກຕົວຊີ້ວັດສຸຂະພາບຂອງສິ່ງແວດລ້ອມ (ທະນາຄານໂລກ, 2006)

ຕົວຊີ້ວັດສຸຂະພາບຂອງສິ່ງແວດລ້ອມ	**ໂຕເລກປະເມີນຂອງປະຊາຊົນທີ່ໄດ້ຮັບຜົນກະທົບ**	
	% ຂອງປະຊາກອນທີ່ບໍ່ທຸກຍາກ	**% ຂອງປະຊາກອນທີ່ທຸກຍາກ**
ການຫຼຸດລົງຂອງຊັບປະຊາກອນປ່າໄມ້ *	*ຕ້ອງການຂໍ້ມູນເພີ່ມ*	*ຕ້ອງການຂໍ້ມູນເພີ່ມ*
ການນຳໃຊ້ທີ່ດິນທີ່ອ່ອນໄຫວທາງສິ່ງແວດລ້ອມ	< 20	< 45
ການນຳໃຊ້ຟືນ /ມົນລະພິດທາງອາກາດຢູ່ໃນເຮືອນ	5	8
ບັນຫາການຂາດນ້ຳປະປາທີ່ຂ້າເຊື້ອແລ້ວ **	20	30
ບັນຫາການຂາດສຸຂາພິບານ	40	70
ໄພແລ້ງ	0.2	1.7
ນ້ຳຖ້ວມ	5	1
ລນຕ ຕົກຄ້າງ	20	28

* ເຖິງແມ່ນວ່າຈະບໍ່ມີຂໍ້ມູນພຽງພໍທີ່ສະແດງໃຫ້ເຫັນເຖິງຜົນກະທົບຈາກການຫຼຸດລົງຂອງຊັບພະຍາກອນປ່າໄມ້ທີ່ມີຕໍ່ປະຊາກອນທັງໝົດ, ແຕ່ກໍ່ມີຫຼັກຖານຊີ້ໃຫ້ເຫັນວ່າ: ຜົນກະທົບດັ່ງກ່າວທີ່ມີຕໍ່ຄົນທຸກຍາກນັ້ນ ອາດຈະມີລັກສະນະບໍ່ສົມສ່ວນຄື: ກຸ່ມຄົວເຮືອນທີ່ທຸກຍາກທີ່ສຸດເຊິ່ງຢູ່ພາກເໜືອ ມີລາຍໄດ້ຈາກເຄື່ອງປ່າຂອງດົງ 40-50% ສູງກ່ວາເມື່ອທຽບໃສ່ກຸ່ມຄົວເຮືອນທີ່ມີລາຍໄດ້ລະດັບກາງແລະຄົວເຮືອນທີ່ຮັ່ງມີ.

** ນີ້ລວມທັງການນຳໃຊ້ແຫຼ່ງນ້ຳເປີດທີ່ບໍ່ໄດ້ຮັບການປົກປ້ອງເຊັ່ນ: ແມ່ນ້ຳ, ໜອງ ແລະ ຫ້ວຍ.

ຂໍ້ມູນຂ່າວສານດັ່ງກ່າວ ຊີ້ໃຫ້ເຫັນວ່າ: ສາຍພົວພັນລະຫວ່າງຄວາມທຸກຍາກກັບສິ່ງແວດລ້ອມ ປະກອບດ້ວຍຫຼາຍດ້ານ ໝາຍຄວາມວ່າ: ການ

ທະນາຄານໂລກ, 2006. ແກນສາຍພົວພັນລະຫວ່າງຄວາມທຸກຍາກ-ສິ່ງແວດລ້ອມ: ວິທີການດຳເນີນງານແບບຍືນຍົງເພື່ອຫຼຸດຜ່ອນຄວາມທຸກຍາກຢູ່ກຳປູເຈຍ, ສປປ ລາວ ແລະ ຫວຽດນາມ.

2. ເຫດຜົນໃນການລວມເອົາຕົວຊີ້ວັດຄວາມທຸກຍາກ-ສິ່ງແວດລ້ອມ (PE) ເຂົ້າໃນແຜນພັດທະນາເສດຖະກິດສັງຄົມຄັ້ງທີ 7

ແຜນພັດທະນາເສດຖະກິດສັງຄົມຄັ້ງທີ 7 (ແຜນຫ້າປີຄັ້ງທີ 7) ໄດ້ກຳນົດເປົ້າໝາຍການການສືບຕໍ່ເຮັດໃຫ້ເສດຖະກິດເຕີບໂຕຢ່າງວ່ອງໄວສຳລັບໄລຍະຫ້າປີຂ້າງໜ້າ ໂດຍຮັກສາອັດຕາການເຕີບໂຕຂອງ DP ໃຫ້ໄດ້ຕ່ຳສຸດທີ່ 8% ຕໍ່ປີ[10], ເຊິ່ງໃນນັ້ນຄາດว่า: ການລົງທຶນຂອງພາກເອກະຊົນຈະເປັນປັດໃຈຂັບເຄື່ອນຫຼັກຂອງການເຕີບໂຕດັ່ງກ່າວ. ໄຟຟ້ານ້ຳຕົກ, ບໍ່ແຮ່ ແລະ ກະສິກຳ ຈະສືບຕໍ່ເປັນຂະແໜງບູລິມະສິດຫຼັກຂອງການເຕີບໂຕ. ຍັງມີເປົ້າໝາຍທີ່ຕ້ອງຂະຫຍາຍການເຂົ້າເຖິງນ້ຳສະອາດແລະໄຟຟ້າສຳລັບປະຊາຊົນໃນເຂດຊົນນະບົດໃຫ້ກວມເອົາ 75% ແລະ 60% ຕາມລຳດັບ.

ເປົ້າໝາຍເສດຖະກິດ-ສັງຄົມຫຼັກອື່ນໆສຳລັບປະເທດ ຍັງລວມມີເປົ້າໝາຍພັດທະນາສະຫະສະວັດ (MD s). ການທົບທວນໄລຍະກາງເພື່ອເບິ່ງຄວາມຄືບໜ້າໃນການບັນລຸ MD s ໄດ້ຊີ້ໃຫ້ເຫັນວ່າ: MD 7 (ຮັບປະກັນຄວາມຍືນຍົງທາງສິ່ງແວດລ້ອມ) ທີ່ມີເປົ້າໝາຍ "*ປ່ຽນທິດການສູນເສຍຊັບພະຍາກອນທາງສິ່ງແວດລ້ອມ*" ນັ້ນແມ່ນ "*ບໍ່ໄປຕາມແຜນຂັ້ນຮ້າຍແຮງ ແລະ ບໍ່ໜ້າຈະເຮັດບັນລຸໄດ້ ຫາກປາສະຈາກຄວາມພະຍາມໃຫຍ່ຫຼວງຈາກທັງຝ່າຍລັດຖະບານແລະຜູ້ໃຫ້ທຶນ*".[11]

ການເຕີບໂຕ ເປັນເງື່ອນໄຂຫຼັກເບື້ອງຕົ້ນຂອງວຽກງານຫຼຸດຜ່ອນຄວາມທຸກຍາກ. ແຕ່ຖ້າລະບົບນິເວດແລະບໍລິການຈາກລະບົບນິເວດ ສືບຕໍ່ເຊື່ອມໂຊມ ກໍ່ຈະເຮັດໃຫ້ບໍ່ສາມາດບັນລຸໄດ້ເສັ້ນທາງຂອງການຫຼຸດຜ່ອນຄວາມທຸກຍາກໃນລັກສະນະຍືນຍົງ[12]. ໃນຂະນະທີ່ປະເທດດຳເນີນໄປໄດ້ຕາມເປົ້າໃນການບັນລຸບັນດາເປົ້າໝາຍເສດຖະກິດ-ສັງຄົມອື່ນໆເຊັ່ນ: ເຮັດໃຫ້ຄວາມທຸກຍາກຂັ້ນຮ້າຍແຮງສຸດຂີດຫຼຸດລົງເຫຼືອເຄິ່ງໜຶ່ງພາຍໃນປີ 2015, ມີຄວາມຈຳເປັນຮີບດ່ວນທີ່ຕ້ອງສະໜອງນແລະຄຸ້ມຄອງຊັບພະ ຍາກອນທຳມະຊາດແບບຍືນຍົງເພື່ອຮັບປະກັນຄວາມຍືນຍົງໃນໄລຍະຍາວຂອງເປົ້າໝາຍລວມດ້ານເສດຖະກິດ. ແຜນຫ້າປີ ໄດ້ຮັບຮູ້ເຖິງຄວາມຈຳເປັນ

[10] ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດຄັ້ງທີ 7 (2011-2015), **ສະບັບ**ສັງລວມຫຍໍ້, ຕຸລາ 2010, ກະຊວງແຜນການແລະການລົງທຶນ (MPI), ນະຄອນຫຼວງວຽງຈັນ, ສປປ ລາວ.

[11] ເປົ້າໝາຍພັດທະນາສະຫະສະວັດ, 2008. ບົດລາຍງານໄລຍະກາງສຳລັບ ສປປ ລາວ.

[12] ຄອມມິມ-*Comim* ແລະອື່ນໆ, 2008. ຕົວຊີ້ວັດຄວາມທຸກຍາກ-ສິ່ງແວດລ້ອມ (PE): ບົດລາຍງານຂຽນຂຶ້ນສຳລັບໂຄງການ PEI ຂອງອົງການ UNDP-UNEP, ວິທະຍາໄລເຊັນ ເອັດມຸນ - *St. Edmund's College*, ແຄມບລິດສ - *Cambridge*.

ດັ່ງກ່າວ ເຊິ່ງມີເປົ້າໝາຍຄືດັ່ງຕໍ່ໄປນີ້: "*ຮັບປະກັນຄວາມຍືນຍົງຂອງການພັດທະນາດ້ວຍການເນັ້ນໜັກໃສ່ສາຍພົວພັນແລະຄວາມສົມດຸນລະຫວ່າງການພັດທະນາເສດຖະກິດ, ຄວາມຄືບໜ້າທາງວັດທະນະທຳແລະສັງຄົມ, ການສະໜອງນຊັບພະຍາກອນທຳມະຊາດ, ແລະ ການປົກປັກຮັກສາສິ່ງແວດລ້ອມ.*[13]"

ເປັນເລື່ອງສຳຄັນທີ່ຕ້ອງມີຄວາມເຂົ້າໃຈພຽງພໍຕໍ່ສາຍພົວພັນລະຫວ່າງ ຄວາມທຸກຍາກ-ສິ່ງແວດລ້ອມ (PE) ເມື່ອພິຈາລະນາຈາກສະພາບເງື່ອນໄຂທີ່ມີການປ່ຽນແປງຢ່າງວ່ອງໄວຢູ່ຂັ້ນຮາກຖານທີ່ເປັນເຫດມາຈາກການເພີ່ມກິດຈະກຳເສດຖະກິດໃນປະເທດ. ສຳລັບ ສປປ ລາວ ທີ່ຕ້ອງການກ້າວໄປຕາມເປົ້າຂອງການບັນລຸບັນດາເປົ້າໝາຍດ້ານຄວາມຍືນຍົງແລະສິ່ງແວດລ້ອມທີ່ກ່າວເອົາໄວ້ນັ້ນ, ເປັນເລື່ອງຈຳເປັນທີ່ຕ້ອງເອົາກຸ່ມຕົວຊີ້ວັດ PE ລວມເຂົ້າໄວ້ໃນຂອບການຕິດຕາມກວດກາແລະປະເມີນຜົນ (M&E) ຕາມໄລຍະເວລາຂອງແຜນຫ້າປີ ເນື່ອງຈາກການເຕີບໂຕທາງເສດຖະກິດແລະການລົງທຶນ ຈະຂະຫຍາຍຕົວຕື່ມອີກໃນໄລຍະຫ້າປີຂ້າງໜ້າ. ການນຳໃຊ້ຕົວຊີ້ວັດ PE ຖືເປັນເຄື່ອງມືສຳຄັນສຳລັບການຕິດຕາມກວດກາຜົນໄດ້ຮັບຂອງຍຸດທະສາດຫຼຸດຜ່ອນຄວາມທຸກຍາກແລະເປົ້າໝາຍພັດທະນາແບບຍືນຍົງ, ແລະການປະເມີນຄວາມຄືບໜ້າ/ຜົນສຳເລັດຂອງແຜນຫ້າປີຄັ້ງທີ 7 ໄປຄຽງຄູ່ກັບຕົວຊີ້ວັດແບບເກົ່າອື່ນໆໃນດ້ານເສດຖະກິດ-ສັງຄົມ, ການເງິນແລະສິ່ງແວດລ້ອມ.

ປະສົບການແລະບົດຮຽນຕ່າງໆຈາກແຜນຫ້າປີສະບັບຜ່ານມາ ໄດ້ສະແດງໃຫ້ເຫັນວ່າ: ວຽກງານສິ່ງແວດລ້ອມ ບໍ່ໄດ້ຖືກລວມເຂົ້າໃນການວາງແຜນພັດທະນາຢ່າງຄົບຖ້ວນໃນໄລຍະຫ້າປີຜ່ານມາ ເຊິ່ງເປັນຜົນນຳໄປສູ່ການເສື່ອມໂຊມໜັກທາງສິ່ງແວດລ້ອມ. ເຖິງຢ່າງໃດກໍ່ດີ, ວຽກງານສິ່ງແວດລ້ອມ ນັບມື້ນັບກາຍເປັນບູລິມະສິດສູງພາຍໃນການດຳເນີນງານຂອງລັດຖະບານແຫ່ງ ສປປ ລາວ ໂດຍມີການກະຕຸກຊຸກຍູ້ຈາກຄວາມຮູ້ແລະຄວາມຮັບຮູ້ທີ່ເພີ່ມຂຶ້ນກ່ຽວກັບບັນຫາດັ່ງກ່າວຢູ່ໃນທຸກຂັ້ນເພື່ອເປັນກ້ອນເສົ້າຄ້ຳໃຫ້ແກ່ການພັດທະນາດ້ວຍການນຳໃຊ້ຊັບພະຍາກອນທາງສິ່ງແວດລ້ອມແບບຍືນຍົງ. ຕົວຊີ້ວັດ PE ທີ່ຖືກລວມເຂົ້າໃນແຜນຫ້າປີຄັ້ງທີ 7 ສາມາດຊ່ວຍແລະສ້າງຄວາມເຂັ້ມແຂງໃຫ້ແກ່ຂະບວນການທີ່ກຳລັງເດີນຢູ່ດັ່ງກ່າວນີ້ໄດ້.

3. ການທົບທວນເບິ່ງບັນດາການສຶກສາທີ່ຜ່ານມາກ່ຽວກັບຕົວຊີ້ວັດຄວາມທຸກຍາກ-ສິ່ງແວດລ້ອມ (PE)

ການສ້າງຕົວຊີ້ວັດ - ສິ່ງວັດແທກດ້ານ PE ທີ່ສັງລວມໃຫ້ເຫັນການເຄື່ອນເໜັງທີ່ສະຫຼັບຊັບຊ້ອນລະຫວ່າງສອງມິຕິດັ່ງກ່າວ ຖືເປັນຂະບວນ ການທີ່

[13] ແຜນພັດທະນາເສດຖະກິດສັງຄົມຄັ້ງທີ 7 (2011-2015), ອັນດຽວກັບທີ່ກ່າວໄວ້ກ່ອນໜ້ານີ້.

ທາກໍ່ມີຫວ່າງບໍ່ດົນມານີ້ ເຊິ່ງໄດ້ສືບຕໍ່ສ້າງຂຶ້ນຈາກວົງກາຂອງຫຼາກຫຼາຍອົງການໃນອາດີດ ແລະ ທາກໍ່ໄດ້ຮັບຈັງຫວະຍູ້ດັນສູງໃນໄລຍະທ້າຍຂອງຊຸມປີ 0.

ຄວາມພະຍາຍາມໃນໄລຍະເບື້ອງຕົ້ນ ແມ່ນການສຶກສາຂອງທະນາຄານໂລກຄື: *ຕົວຊີ້ວັດຄວາມທຸກຍາກ-ສິ່ງແວດລ້ອມ*[14] ເຊິ່ງຊອກຫາວິທີເພື່ອພັດທະນາຕົວຊີ້ວັດທີ່ສາມາດນຳໃຊ້ "ຈາກລະດັບປະເທດເຖິງລະດັບໂລກ" ແລະສາມາດນຳໃຊ້ເພື່ອສົມທຽບລະຫວ່າງປະເທດນຳກັນ. ຕົວຊີ້ວັດທີ່ຖືກສະເໜີຂຶ້ນນີ້ ແມ່ນກວມເອົາສອງຂົງເຂດທີ່ຕ່າງກັນແຕ່ກໍ່ມີລັກສະນະສະໜັບສະໜູນເຊິ່ງກັນແລະກັນ. ຕົວຊີ້ວັດປະເພດທຳອິດ ອະທິບາຍສາຍພົວພັນລະຫວ່າງສະພາບເງື່ອນໄຂທາງສິ່ງແວດລ້ອມ (ເຊັ່ນ: ຄຸນະພາບຂອງນ້ຳ, ລະດັບມົນລະພິດ ແລະ ສິ່ງເສດເຫຼືອ) ກັບ ສຸຂະພາບຂອງມະນຸດ. ຕົວຊີ້ວັດ PE ປະເພດທີສອງ ຕິດຕາມກວດກາຜົນກະທົບຂອງການສູນເສຍຊັບພະຍາກອນໃນຖານະເປັນປັດໃຈກຳນົດຄວາມທຸກຍາກ ເຊິ່ງວັດແທກວິທີການສູນເສຍການເຂົ້າເຖິງຊັບພະຍາກອນທີ່ສົ່ງຜົນກະທົບຕໍ່ຄົນທຸກ. ຕົວຊີ້ວັດເຫຼົ່ານີ້ ມີລັກສະນະເຂັ້ມຂຸ້ນທາງດ້ານຂໍ້ມູນຂ່າວສານສູງ ແລະ ຈຳເປັນຕ້ອງມີລະບົບຂໍ້ມູນຂ່າວສານທີ່ສະຫຼັບຊັບຊ້ອນສົມຄວນເພື່ອຊ່ວຍໃຫ້ມີການນຳໃຊ້ຢ່າງມີປະສິດທິຜົນ. ດ້ວຍເຫດຜົນດັ່ງກ່າວນີ້, ຕົວຊີ້ວັດເຫຼົ່ານີ້ຈຶ່ງເບິ່ງຄືບໍ່ເໝາະກັບຜູ້ນຳໃຊ້ໃນລະດັບທ້ອງຖິ່ນ ຫຼື ແມ່ນແຕ່ອົງການລະດັບປະເທດໃນຫຼາຍປະເທດກຳລັງພັດທະນາ.

ການສຶກສາຂອງ DFID ໃນຫົວຂໍ້ *(ຄວາມທຸກຍາກແລະສິ່ງແວດລ້ອມ: ວັດແທກສາຍພົວພັນ*[15]*)* ໄດ້ປະກອບສ່ວນເພີ່ມເຂົ້າໃນການພັດທະນາຕົວຊີ້ວັດທົ່ວໄປຂອງສາຍພົວພັນລະຫວ່າງຄວາມທຸກຍາກ-ສິ່ງແວດລ້ອມເພື່ອໃຊ້ເຂົ້າໃນການວິເຄາະໂດຍສົມທຽບລະຫວ່າງປະເທດ. ການສຶກສາດັ່ງກ່າວ ໄດ້ເນັ້ນໜັກຄວາມຫຼາກຫຼາຍຂອງການເຄື່ອນເໜັງດ້ານສາຍພົວພັນລະຫວ່າງຄວາມທຸກຍາກ-ສິ່ງແວດລ້ອມພາຍໃນບັນດາປະເທດກຳລັງພັດທະນາ ແລະ ໄດ້ເນັ້ນໃຫ້ເຫັນຄວາມຈຳເປັນຕ້ອງປັບປຸງນວິທີການດຳເນີນງານໃຫ້ເຂົ້າກັບສະພາບເງື່ອນໄຂພາຍໃນຂອງປະເທດ ຫຼື ທ້ອງຖິ່ນ. ກຸ່ມຕົວຊີ້ວັດດັ່ງກ່າວ ໄດ້ຖືກປະເມີນເບິ່ງໃນດ້ານຄວາມສອດຄ່ອງ ແລະ ຂໍ້ມູນທີ່ມີສະໜອງໃຫ້ເພື່ອການນຳໃຊ້ຢູ່ປະເທດອູການດ້າ, ເນປານ ແລະ ນິການາກົວ, ແລະ ເນັ້ນໜັກໃຫ້ເຫັນເຖິງຄວາມສະຫຼັບຊັບຊ້ອນຂອງການນຳໃຊ້ຕົວຊີ້ວັດທົ່ວໄປໃນປະເທດສະເພາະ ຕະຫຼອດເຖິງສິ່ງທ້າທາຍຕ່າງໆ ໃນການນຳໃຊ້ຕົວຊີ້ວັດເຫຼົ່ານັ້ນເຂົ້າໃນການວິເຄາະໂດຍສົມທຽບລະຫວ່າງປະເທດ.

ການສຶກສາຂອງເຮັນນິນເກີ *(Henninger)* ແລະ ແຮັມມ່ອນ *(Hammond)*[16] ໃນຫົວຂໍ້*ຕົວຊີ້ວັດສິ່ງແວດລ້ອມທີ່ສອດຄ່ອງກັບວົງກາງານຫຼຸດຜ່ອນຄວາມທຸກຍາກ* ແມ່ນໄດ້ສຸມໃສ່ຕົວຊີ້ວັດຊັບພະຍາກອນທຳມະຊາດ ແລະ ການວິເຄາະເຂດແຄ້ວນເພື່ອຄິດໄລ່ 'ຕົວຊີ້ວັດຄວາມສ່ຽງທີ່ອາດເກີດຂຶ້ນ'. ເຂົາເຈົ້າ ໄດ້ເນັ້ນໜັກໃຫ້ເຫັນສິ່ງທ້າທາຍຂອງການເຄື່ອນຍ້າຍຈາກສາຍພົວພັນ PE ໄປສູ່ຕົວຊີ້ວັດ PE ເຖິງວ່າກົນໄກທີ່ເຊື່ອມໂຍງວົງກາງານສິ່ງແວດລ້ອມໃສ່ກົດຈະກຳຫຼຸດຜ່ອນຄວາມທຸກຍາກ ມັກພົບຢູ່ເລື້ອຍໆວ່າມີຢູ່ໃນຂັ້ນຈຸລະພາກ ໂດຍຂໍ້ມູນທີ່ຈະໃຊ້ອະທິບາຍຕົວຊີ້ວັດຕ່າງໆເຫຼົ່ານັ້ນ ແມ່ນຫາໄດ້ສະເພາະແຕ່ໃນຂັ້ນຈຸລະພາກເທົ່ານັ້ນ. ຍ້ອນແນວນັ້ນ, "ໂດຍທົ່ວໄປແລ້ວ, ສາຍພົວພັນເຫດແລະຜົນທີ່ສາມາດພິສູດໄດ້ລະຫວ່າງໂຕຊີ້ວັດຂອງຄຸນະພາບແລະສະພາບເງື່ອນໄຂທາງສິ່ງແວດລ້ອມ ກັບ ການຫຼຸດຜ່ອນຄວາມທຸກຍາກທີ່ເປັນໂຕເລກສະຖິຕິສະເລ່ຍແຫ່ງຊາດ ຈຶ່ງບໍ່ມີ". ເຖິງຢ່າງໃດກໍ່ຕາມ, ຜູ້ຂຽນທັງສອງ ໄດ້ສະເໜີວ່າ: ການນຳໃຊ້ຂໍ້ມູນສະເພາະເຂດແຄ້ວນ ສາມາດເປີດເຜີຍໃຫ້ເຫັນຢ່າງຈະແจ້ງເຖິງຮູບແບບຂອງການພົວພັນເຊິ່ງກັນແລະກັນລະຫວ່າງມິຕິຄວາມທຸກຍາກກັບສິ່ງແວດລ້ອມ. ເພື່ອສະແດງໃຫ້ເຫັນໄດ້ເຖິງປະເດັນດັ່ງກ່າວ, ຜູ້ຂຽນໄດ້ສາທິດໃຫ້ເຫັນເຖິງວິທີທີ່ຕົວຊີ້ວັດດ້ານໂພຊະນາການຂອງເດັກ ພົວພັນຢ່າງໃກ້ຊິດກັບບັນຫາການຂາດນ້ຳຂອງດິນໃນລະດັບຕ່າງໆຢູ່ອາຟຣິກາຕາເວັນຕົກ.

ວິທີການດຳເນີນງານຂອງອົງການ WWF[17] ໃນການພັດທະນາແລະນຳໃຊ້ຕົວຊີ້ວັດ PE ແມ່ນໄດ້ສຸມໃສ່ການສະໜອງຂໍ້ມູນຂ່າວສານໃຫ້ແກ່ພາກສ່ວນກ່ຽວຂ້ອງພາຍໃນປະເທດ ຫຼື ທ້ອງຖິ່ນເພື່ອຊອກຫາວິທີປັບປຸງສະພາບເງື່ອນໄຂພາຍໃນຜ່ານບັນດາກົດຈະກຳຊ່ວຍເຫຼືອສະເພາະຕ່າງໆ. ມວນຊົນທີ່ເປັນເປົ້າໝາຍຫຼັກຂອງເຂົາເຈົ້າ ແມ່ນປະຊາກອນທີ່ດຳລົງຊີວິດຢູ່ເຂດຊົນນະບົດ, ແລະ ເປົ້າໝາຍແມ່ນເພື່ອເສີມສ້າງຄວາມເຂັ້ມແຂງໃຫ້ແກ່ຄົນທຸກ ເຮັດໃຫ້ເຂົາເຈົ້າສາມາດແຂ່ງຂັນເພື່ອໃຫ້ມີບົດບາດທາງການເມືອງ, ປັບປຸງການຄຸ້ມຄອງຊັບພະຍາກອນຕະຫຼອດເຖິງຊີວິການເປັນຢູ່ ຫຼື ການຫາລ້ຽງຊີບຂອງເຂົາເຈົ້າ. ວິທີການດຳເນີນງານຂອງອົງການດັ່ງກ່າວ ແມ່ນເນັ້ນໃສ່ຕົວຊີ້ວັດ PE ສາມປະເພດຄື:) ຕົວຊີ້ວັດດ້ານສະຖານະ) ຕົວຊີ້ວັດດ້ານສະພາບເງື່ອນໄຂເອື້ອອຳນວຍ ແລະ) ຕົວຊີ້ວັດດ້ານທຶນສັງຄົມ. ຈຸດເນັ້ນໃນທີ່ນີ້ ແມ່ນເນັ້ນໃສ່ການຕອບໂຕ້ທາງສັງຄົມແລະສາຍພົວພັນທາງສະຖາບັນ ແຕ່ບໍ່ໄດ້ອະທິບາຍຫຍັງຫຼາຍກ່ຽວກັບລັກສະນະທີ່ການຕອບໂຕ້ແລະສາຍພົວພັນເຫຼົ່ານັ້ນວ່າສົ່ງກະທົບແນວໃດຕໍ່ສາຍພົວພັນລະຫວ່າງຄວາມທຸກຍາກກັບສິ່ງແວດລ້ອມ.

ບັນດາການສຶກສາເຫຼົ່ານີ້ (ແລະການສຶກສາອື່ນໆອີກຈຳນວນຫຼາຍ) ໄດ້ໃຫ້ບົດຮຽນສຳຄັນສາມຢ່າງຄື: ທຳອິດ, ຕົວຊີ້ວັດ PE ທີ່ດີ ຈຳເປັນຕ້ອງເຊື່ອມສານກັບແລະສອດຄ່ອງກັບສະພາບເງື່ອນໄຂທາງສັງຄົມແລະສິ່ງແວດລ້ອມທີ່ອ້າງອີງເຖິງ. ຢ່າງທີສອງ, ຕົວຊີ້ວັດ PE ທີ່ດີ ຍັງຄວນຕ້ອງຢືດໝັ້ນ

---

[14] Shya s n ar, P. 2002. ຕົວຊີ້ວັດ PE. ເສດຖະສາດສິ່ງແວດລ້ອມ. ເອກະສານເລກທີ 84. ທະນາຄານໂລກ, ວໍຊິງຕັນ ດີຊີ. ມັງກອນ, 32 pp. ລະອຽດເບິ່ງໄດ້ທີ່: http://lnw b18.w rl bank. ŗ / ss / ss xt.nsf/44ByD Na /P v rtyan En v r n ntIn at rs200218 KPDF/$FILE/P v rtyan Env r n ntIn at rs2 002.p f

[15] N nan, F. ແລະ ອື່ນໆ 2002. ການສຶກສາຕົວຊີ້ວັດ PE ດ້ວຍກໍລະນີສຶກສາຈາກເນປານ, ນິການະກົວ ແລະ ອູການດ້າ. ກົນນະໂຍບາຍສິ່ງແວດລ້ອມ, ເອກະສານເລກທີ 2. ກົນພັດທະນາສາກົນແຫ່ງຄາດຊະອານາຈັກອັງກິດ, ລອນດອນ.

[16] H nn n r, N. An Ha n , A (2002) "ຕົວຊີ້ວັດສິ່ງແວດລ້ອມທີ່ສອດຄ່ອງກັບວົງກາງານຫຼຸດຜ່ອນຄວາມທຸກຍາກ" ຍຸດທະສາດສິ່ງແວດລ້ອມ, ເອກະສານເລກທີ 3.

[17] R , D. ແລະ Tharakan, P. (2004) ການພັດທະນາແລະນຳໃຊ້ຕົວຊີ້ວັດ PE. ວໍຊິງຕັນ: ຫ້ອງການແຜນງານເສດຖະສາດມະຫາພາກຂອງ WWF.

ຕາມຄ່ານິຍົມ ແລະ ຂະບວນການຕັດສິນບັນຫາຂອງທ້ອງຖິ່ນເພື່ອໃຫ້ສາມາດຂໍຄຳປຶກສາກັບຜູ້ສ້າງນະໂຍບາຍກ່ຽວກັບຂໍ້ມູນຂ່າວສານດັ່ງກ່າວ ແລະ ເສີມສ້າງຄວາມໂປ່ງໃສ. ແລະ ຢ່າງທີສາມ, ເປັນເລື່ອງສຳຄັນທີ່ຕ້ອງສັງເກດວ່າ: ມັນມີຄວາມເຄັ່ງຕຶງລະຫว่າງບັນດາວິທີການຕ່າງໆທີ່ເປັນບ່ອນອີງສ່ວນໃຫຍ່ໃຫ້ແກ່ການກຳນົດແນວຄວາມຄິດກ່ຽວກັບສາຍພົວພັນ PE ໃນຂັ້ນຈຸລະພາກ ແຕ່ໃນຂະນະດຽວກັນເຫັນວ່າ: ປະຈຸບັນນີ້ ສ່ວນໃຫຍ່ແລ້ວແມ່ນຂໍ້ມູນລະດັບຊາດທີ່ໄດ້ຮັບການເກັບກຳແລະມີສະໜອງໃຫ້ຢ່າງເປັນປົກກະຕິ ໂດຍສະເພາະໃນກໍລະນີຂອງບັນດາປະເທດກຳລັງພັດທະນາ.

4. ບັນຊີລາຍຊື່ສະເໜີບັນດາຕົວຊີ້ວັດສາຍພົວພັນລະຫว่າງຄວາມທຸກຍາກ-ສິ່ງແວດລ້ອມ (PE)

ຕົວຊີ້ວັດ ຄືກັນກັບທຸງ ເຊິ່ງຖືກນຳໃຊ້ເພື່ອເຮັດໃຫ້ມີຄວາມກະທັດຮັດ, ວັດແທກ ແລະ ສື່ສານຂໍ້ມູນຂ່າວສານ ແລະ ລະດົມການສະໜັບສະໜູນ ຊ່ວຍເຫຼືອໃຫ້ແກ່ມາດຕະການດຳເນີນງານ. ຕົວຊີ້ວັດໃດໜຶ່ງ ບໍ່ຖືວ່າເປັນສິ່ງລຶກລັບ; ມັນເປັນພຽງແຕ່ວິທີວັດແທກແລະເຮັດໃຫ້ສາມາດເຂົ້າໃຈໄດ້ຕໍ່ສິ່ງໃດສິ່ງໜຶ່ງ ທີ່ຖືວ່າສຳຄັນ. (ເຈມສ໌ ແມັກກິວເຣ -James McGilvray)[18]

ເມື່ອພິຈາລະນາຈາກບົດຮຽນຕ່າງໆທີ່ຖອດຖອນໄດ້ຈາກການສຶກສາຜ່ານມາໃນການກຳນົດຕົວຊີ້ວັດ PE ແລະ ຜົນໄດ້ຮັບຈາກການສຶກສາຂອງທະນາຄານໂລກໃນຕາຕະລາງ 1, ໂຄງການເຊື່ອມໂຍງວຽກສິ່ງແວດລ້ອມເຂົ້າໃນກົດຈະກຳຫຼຸດຜ່ອນຄວາມທຸກຍາກ (PEI) ຂອງອົງການ UNDP-UNEP ຈຶ່ງສະເໜີກຸ່ມຕົວຊີ້ວັດ PE ຈຳນວນໜຶ່ງ[1] ເພື່ອໃຊ້ພາຍໃນຂອບ M&E ຂອງແຜນຫ້າປີ ຄືດັ່ງທີ່ໄດ້ສະແດງໄວ້ໃນຕາຕາລາງ 2 ຂ້າງລຸ່ມນີ້. ກຸ່ມຕົວຊີ້ວັດ PE ດັ່ງກ່າວນີ້ ໄດ້ຮັບການຈັດລະດັບບູລິມະສິດແລະຄັດຈ້ອນບົນພື້ນຖານເງື່ອນໄຂຄືດັ່ງຕໍ່ໄປນີ້ (ເຊິ່ງຖືກດັດປັບມາຈາກຄອມມິ-ແລະອື່ນໆ, 2008):) ຄວາມສອດຄ່ອງກັບສະພາບເງື່ອນໄຂຕົວ

[18] ກ່າວໄວ້ໃນໜ້າ 22, ແລະ ອື່ນໆ 2008.

[1] ນຳພາໂດຍກົມແຜນການຂອງກະຊວງແຜນການແລະການລົງທຶນ, ກຸ່ມຕົວຊີ້ວັດ PE ໃນວົງກ້ວາງ ໄດ້ຮັບການກຳນົດຂຶ້ນໂດຍຜ່ານການຂໍຄຳປຶກສາກັບບັນດາກະຊວງຕ່າງໆ (ກົມສະຖິຕິ ແລະ ສະຖາບັນຄົ້ນຄ້ວາເສດຖະກິດແຫ່ງຊາດ (NERI) ຂອງກະຊວງແຜນການແລະການລົງທຶນ (MPI); ອົງການຊັບພະຍາກອນນ້ຳແລະສິ່ງແວດລ້ອມ (WREA); ອົງການຄຸ້ມຄອງທີ່ດິນແຫ່ງຊາດ (NLMA); ກະຊວງກະສິກຳ-ປ່າໄມ້ (MAF); ແລະຄະນະກຳມະການຊີ້ນຳການພັດທະນາຊົນນະບົດແລະລົບລ້າງຄວາມທຸກຍາກຈາກຫ້ອງການນາຍົກລັດຖະມົນຕີ ໃນໄລຍະເດືອນມີນາຫາເດືອນສິງຫາ 2010. ຕົວຊີ້ວັດສຳຄັນອີກຫຼາຍໂຕຈາກກຸ່ມຕົວຊີ້ວັດໃນວົງກ້ວາງດັ່ງກ່າວ ບໍ່ໄດ້ຖືກລວມເອົາເຂົ້າໃນບັນຊີລາຍຊື່ຕົວຊີ້ວັດດັ່ງກ່

ຕາຕະລາງ 2: ສະເໜີກຸ່ມຕົວຊີ້ວັດ PE ທີ່ເປັນຕົວແທນເພື່ອເອົາລວມເຂົ້າໃນຂອບ M&E ຂອງແຜນພັດທະນາເສດຖະກິດ-ສັງຄົມ (ແຜນຫ້າປີ) ຄັ້ງທີ 7

	ຕົວຊີ້ວັດ PE	**ຄຳນິຍາມແລະການຕີຄວາມໝາຍຂອງສາຍພົວພັນດ້ານເຫດແລະຜົນລະຫວ່າງ ຄວາມທຸກຍາກ-ສິ່ງແວດລ້ອມ**	**ສາມາດຮຽນຮູ້ຫຍັງໄດ້ແດ່ / ມາດຕະການທີ່ເປັນໄປໄດ້**
1	**ຈຳນວນເມືອງທີ່ມີ ແຜນນຳໃຊ້ທີ່ດິນ**	ຕົວຊີ້ວັດດັ່ງກ່າວ ຈະຖອນເອົາຕາມແຜນແມ່ບົດແຫ່ງຊາດວ່າດ້ວຍການນຳໃຊ້ທີ່ດິນ ທີ່ຄາດວ່າຈະສຳເລັດພາຍໃນທ້າຍປີ 2010 ໂດຍແຜນແມ່ບົດດັ່ງກ່າວ ຈະເປັນທິດເຍືອງທາງໃຫ້ແກ່ການສຳຫຼວດແລະການຈັດສັນທີ່ດິນ[20] . ຕົວຊີ້ວັດດັ່ງກ່າວນີ້ ຈະເກັບກຳເອົາຄວາມຄືບໜ້າຂອງຂະບວນການອອກໃບຕາດິນ, ການກຳນົດເຂດ ຫຼື ການຈັດສັນທີ່ດິນເພື່ອການລົງທຶນ, ການຂຸດຄົ້ນແລະການສະ ຫງວນຊັບພະຍາກອນທຳມະຊາດໃນຂັ້ນເມືອງ. ຍ້ອນການລົງທຶນ ໄດ້ຂະຫຍາຍຕົວໃນໄລຍະສອງ-ສາມປີຫຼ້າສຸດ, ການຂາດ ການວາງແຜນນຳໃຊ້ທີ່ດິນຢ່າງເປັນລະບົບ ໄດ້ກາຍເປັນບັນຫາສ້າງຄວາມເສຍ ຫາຍຕົວຈິງ ເຊິ່ງຈຸດໜັກເຮັດໃຫ້ມີການຂຸດຄົ້ນຊັບພະຍາກອນຫຼາຍຈົນເກີນໄປ ແລະ ເປັນຜົນເຮັດໃຫ້ເກີດມີຂໍ້ຂັດແຍ່ງແລະການແຂ່ງຂັນໃນດ້ານການນຳໃຊ້ທີ່ ດິນລະຫວ່າງການໃຫ້ສຳປະທານ ກັບ ການນຳໃຊ້ທີ່ດິນໂດຍປະຊາຊົນທ້ອງຖິ່ນ ໂດຍພົບເລື້ອຍໆວ່າ: ປະຊາຊົນທ້ອງຖິ່ນມີໂອກາດໜ້ອຍທີ່ຈະໄດ້ເຂົ້າຮ່ວມໃນ ຂະບວນການຕັດສິນບັນຫາກ່ຽວກັບການນຳໃຊ້ທີ່ດິນ. ການຂາດການຄ້ຳປະ ກັນດ້ານໃບຕາດິນ ອາດຈະເຮັດໃຫ້ບັນຫາຄວາມທຸກຍາກເຮັ່ງຮ້າຍຂຶ້ນໄປຕື່ມ ອີກ ຍ້ອນປະຊາຊົນທ້ອງຖິ່ນບໍ່ສາມາດວາງແຜນໄລຍະຍາວ ຕະຫຼອດເຖິງບໍ່ສາ ມາດເຂົ້າເຖິງການລົງທຶນປະເພດຕ່າງໆໃສ່ທີ່ດິນແລະຊັບພະຍາກອນທຳມະ ຊາດໄດ້ ຕົວຢ່າງ: ບໍ່ສາມາດເຂົ້າເຖິງສິ່ງຈູງໃຈ ຫຼື ສິນເຊື່ອສຳລັບບໍລິການສິ່ງ ແວດລ້ອມ ໂດຍນຳໃຊ້ທີ່ດິນເປັນຫຼັກຊັບຄ້ຳປະກັນ. ການປ່ຽນແປງໃນທາງບວກພາຍໃນຕົວຊີ້ວັດດັ່ງກ່າວນີ້ ເປັນສັນຍານແຈ້ງໃຫ້ຮູ້ ວ່າ: ມີຈຳນວນເມືອງເພີ່ມຂຶ້ນທີ່ກຳລັງດຳເນີນການວາງແຜນນຳໃຊ້ທີ່ດິນ. ໜ້າ ຈະບໍ່ມີການປ່ຽນແປງໃນທາງລົບໃດໆ ເວັ້ນເສຍແຕ່ວ່າ: ແຜນນຳໃຊ້ທີ່ດິນຫາກ ຖືກລົບລ້າງ ຫຼື ຍົກເລີກ. ຕົວຊີ້ວັດດັ່ງກ່າວນີ້ ຍັງຈະຖືກກຳນົດໂຄງສ້າງໃຫ້ສາ ມາດເກັບກຳເອົາການດັດແກ້ທີ່ເປັນລະບົບຕາມໄລຍະເວລາທີ່ມີຕໍ່ແຜນນຳໃຊ້ທີ່ ດິນ.	ຕົວຊີ້ວັດດັ່ງກ່າວ ເກັບກຳເອົາແຜນນຳໃຊ້ທີ່ດິນທີ່ຖືກ ສ້າງຂຶ້ນ ແຕ່***ບໍ່ໄດ້***ເກັບກຳເອົາດ້ານຄຸນນະພາບຂອງ ການວາງແຜນນຳໃຊ້ທີ່ດິນເພີ່ມຫຼາຍຂຶ້ນກ່ວາເດີມແຕ່ ຢ່າງໃດ, ເຊິ່ງສາມາດສົ່ງຜົນສະທ້ອນອັນສຳຄັນຍິ່ງຕໍ່ ການຈັດຕັ້ງປະຕິບັດແຜນດັ່ງກ່າວ. ດ້ານເຫຼົ່ານັ້ນລວມ ມີ: ລະດັບການມີສ່ວນຮ່ວມຂອງທ້ອງຖິ່ນ, ການລວມ ເອົາດ້ານ/ຂໍ້ຈຳກັດຕ່າງໆທາງສິ່ງແວດລ້ອມ, ແລະ ການບັງຄັບປະຕິບັດດ້ານການຮັກສາເຂດແດນ. ຕາມ ລັກສະນະທີ່ກ່າວມານັ້ນ, ການວາງແຜນນຳໃຊ້ທີ່ດິນ ຄວນປະຕິບັດຕາມຄູ່ມືແນະນຳທາງການທີ່ສ້າງໂດຍ MAF ແລະ NLMA (ການວາງແຜນວຽກງານກະສິກຳ -ປ່າໄມ້ ແລະ ການນຳໃຊ້ທີ່ດິນແບບມີສ່ວນຮ່ວມ), ແລະ MPI (ຄູ່ມືວາງແຜນແບບມີສ່ວນຮ່ວມ). ຂໍ້ມູນຂ່າວສານດັ່ງກ່າວນີ້ ຈະເປັນພື້ນຖານໃຫ້ແກ່ການ ປະເມີນການມີສະໜອງໃຫ້ຂອງທີ່ດິນເພື່ອໃຫ້ສຳ ປະທານ, ແລະ ການປະເມີນການເລືອກໄດ້ເລືອກເສຍ ທາງເສດຖະກິດ-ສິ່ງແວດລ້ອມລະຫວ່າງຂະແໜງການ ເພື່ອໃຊ້ໃນການພິຈາລະນາຈັດສັນສຳລັບການນຳໃຊ້ ຕາມເປົ້າໝາຍຕ່າງໆ.
2	**% ຄົວເຮືອນທີ່ນຳໃຊ້ ຟືນ ຫຼື ຖ່ານ ເປັນ ແຫຼ່ງສະໜອງພະ ລັງງານຫຼັກ**	ປະມານ 80% ຂອງຄົວເຮືອນລາວທັງໝົດ ນຳໃຊ້ຟືນ, ແລະ 15% ໃຊ້ຖ່ານ ເພື່ອເປັນເຊື້ອໄຟແຕ່ງຢູ່ຄົວກິນ, ໃຫ້ຄວາມຮ້ອນ ແລະ ໃຫ້ແສງສະຫວ່າງ (ການ ສຳຫຼວດປະຊາກອນ, 2005). ການນຳໃຊ້ເຊື້ອໄຟທີ່ສ້າງມົນລະພິດເຫຼົ່ານີ້ ສາມາດກາຍເປັນພາລະແບກຫາບໃຫຍ່ຫຼວງຕໍ່ສຸຂະພາບຂອງຄົນໃນຄົວເຮືອນ	ຂໍ້ມູນຂ່າວສານດັ່ງກ່າວນີ້ ຈະຊ່ວຍລະບຸບັນດາທາງ ເລືອກໃນການພັດທະນາແລະຄຸ້ມຄອງຊັບພະຍາກອນ ທີ່ເໝາະສົມເຊັ່ນ: - ພັດທະນາຊຸມຊົນ-ຄຸ້ມຄອງການປູກໄມ້ເພື່ອໃຊ້ເປັນ

[20] ໜັງສືພິມ V nt an T s, "ແຜນແມ່ບົດຂະແໜງທີ່ດິນ ຈະສຳເລັດໃນເດືອນພະຈິກ", 7 ຕຸລາ 2010

		ທຸກຍາກ ແລະ ການເອື່ອຍອີງໃສ່ແຫຼ່ງເຊື້ອໄຟດັ່ງກ່າວ ຍັງຖືກກຳນົດວ່າເປັນທັງສາເຫດແລະຜົນໄດ້ຮັບຂອງຄວາມທຸກຍາກ[21]. ການເອື່ອຍອີງດັ່ງກ່າວນີ້ ອາດຈະເປັນຍ້ອນການຂາດທາງເລືອກໃນການເຂົ້າເຖິງແຫຼ່ງເຊື້ອໄຟປະເພດອື່ນ ບໍ່ວ່າຈະເປັນຍ້ອນບັນຫາຂອງການມີສະໜອງໃຫ້, ລາຍໄດ້ ຫຼື ຂໍ້ຈຳກັດດ້ານລາຄາ. ນອກຈາກນັ້ນ, ຄ່າເສຍໂອກາດດ້ານແຮງງານໃນການໄປເກັບຟືນ ກໍ່ເຫັນວ່າຕ່ຳຫຼາຍ ໂດຍສະເພາະໃນເຂດຊົນນະບົດ. ລະຫວ່າງໄລຍະ 1 5-2005 ພົບວ່າ: ມີທ່າອ່ຽງເພີ່ມຂຶ້ນຂອງການນຳໃຊ້ຖ່ານ ໃນຂະນະທີ່ການນຳໃຊ້ໄຟຟ້າພັດຫຼຸດລົງ ເຊິ່ງອາດຈະເປັນຍ້ອນຄວາມແຕກຕ່າງດ້ານລາຄາທີ່ຍັບກ້ວາງອອກ. ທ່າອ່ຽງດັ່ງກ່າວ ໄດ້ຊີ້ໃຫ້ເຫັນເຖິງບັນຫາການເອື່ອຍອີງທີ່ເພີ່ມສູງຂຶ້ນກ່ວາເດີມຕໍ່ຖານຊັບພະຍາກອນທຳມະຊາດ. ບໍ່ເປັນໜ້າສົງໃສว່າ: ອັດຕາສ່ວນຮ້ອຍທີ່ສູງຂອງຄົວເຮືອນຊົນນະບົດທີ່ນຳໃຊ້ຟືນ ໄດ້ເຮັດໃຫ້ມີຄວາມກົດດັນຕໍ່ປ່າແລະຊັບພະຍາກອນໄມ້ໃນຂົງເຂດໃກ້ຄຽງ; ສ່ວນຄວາມຕ້ອງການໃນເຂດຕົວເມືອງ ຍັງເຮັດໃຫ້ເກີດມີຄວາມກົດດັນເພີ່ມຕໍ່ເຂດປ່າສະຫງວນທີ່ຢູ່ໄກອອກໄປ.[22] ການປ່ຽນແປງໃນທາງບວກພາຍໃນຕົວຊີ້ວັດດັ່ງກ່າວນີ້ ຊີ້ໃຫ້ເຫັນເຖິງການເອື່ອຍອີງທີ່ເພີ່ມສູງຂຶ້ນຕໍ່ເຊື້ອໄຟປະເພດນີ້ ແລະ/ຫຼື ຄວາມຫຍຸ້ງຍາກທີ່ເພີ່ມສູງຂຶ້ນໃນການເຂົ້າເຖິງແຫຼ່ງເຊື້ອໄຟທີ່ເປັນທາງເລືອກ (ເຊິ່ງອາດຈະພົວພັນກັບຄວາມແຕກຕ່າງດ້ານລາຄາທີ່ນັບມື້ນັບເພີ່ມສູງຂຶ້ນ); ແລະ/ຫຼື ການເພີ່ມຂຶ້ນຂອງພົນລະເມືອງ. ການປ່ຽນແປງໃນທາງລົບ ອາດຈະເປັນຍ້ອນການຫັນເປັນຕົວເມືອງທີ່ເພີ່ມສູງຂຶ້ນ ເຊິ່ງເປັນບ່ອນທີ່ສາມາດເຂົ້າເຖິງໄຟຟ້າ ຫຼື ອາຍແກດສ໌ທີ່ໃຊ້ເພື່ອແຕ່ງຢູ່ຄົວກິນໄດ້ງ່າຍ; ມີຊັບພະຍາກອນຟືນໜ້ອຍ (ເຊິ່ງອາດຈະເປັນຍ້ອນບັນຫາການທຳລາຍປ່າທີ່ເພີ່ມສູງຂຶ້ນ; ແລະ/ຫຼື ມີທາງເລືອກອື່ນເພີ່ມສູງຂຶ້ນພາຍໃນຂອບເຂດຄວາມສາມາດຈ່າຍໄດ້.	ໄມ້ຟືນແລະຖ່ານທີ່ມີຈັງຫວະການເຕີບໂຕຢ່າງວ່ອງໄວ ເພື່ອຫຼຸດຜ່ອນຄວາມກົດດັນຕໍ່ຊັບພະຍາກອນປ່າໄມ້ທຳມະຊາດ. - ທົບທວນແຜນກຳນົດລາຄາພະລັງງານທາງເລືອກ ແລະ ຄວາມສາມາດເຂົ້າເຖິງແຫຼ່ງພະລັງງານເຫຼົ່ານັ້ນ (ຕົວຢ່າງ: ໄຟຟ້າ, ແກດສ໌) ແລະນຳໃຊ້ທາງອອກໃນການນຳໃຊ້ພະລັງງານທົດແທນຂະໜາດນ້ອຍ. - ນຳສະເໜີໃຫ້ມີການນຳໃຊ້ເຕົາປະຫຍັດພະລັງງານທີ່ໃຊ້ຟືນຢ່າງມີປະສິດທິພາບຫຼາຍຂຶ້ນກ່ວາເດີມ ແລະ ສ້າງມົນລະພິດໜ້ອຍລົງ.

[21] ການສຶກສາຂອງອົງການ WH ໄດ້ສະແດງໃຫ້ເຫັນເຖິງຜົນກະທົບທີ່ທຳລາຍສຸຂະພາບຈາກການນຳໃຊ້ຟືນ/ຖ່ານ. ທຸກປີ, ມົນລະພິດທາງອາກາດຢູ່ໃນເຮືອນ ໄດ້ເປັນສາເຫດຄວາມຕາຍຂອງຄົນປະມານ 1.6 ລ້ານຄົນ ແລະ ສິ່ງຜົນກະທົບໜັກຕໍ່ແມ່ຍິງ ເຊິ່ງໂດຍທົ່ວໄປແລ້ວເປັນຜູ້ທີ່ຮັບຜິດຊອບວຽກແຕ່ງຢູ່ຄົວກິນແລະວຽກດັງໄຟໃຫ້ຄວາມອົບອຸ່ນພາຍໃນເຮືອນ (http://www.wh . nt/ a ntr /fa tsh ts/fs2 2/ n/).

[22] M ss rl P, H n ann A, Eppr ht M, Ph n saly S, Th raka , M n t N, t rs. 2008: *ແຜນທີ່ເສດຖະກິດ-ສັງຄົມຂອງ ສປປ ລາວ - ການວິເຄາະບົນພື້ນຖານການສຳຫຼວດຄົວເຮືອນແລະປະຊາກອນ* 2005. ສູນຄວາມສາມາດຄົ້ນຄ້ວາວິໃຈເໜືອ-ໃຕ້ແຫ່ງຊາດສະວິດເຊີແລນ (N R), ມະຫາວິທະຍາໄລຍະເບີນ *(University of Bern)*, B rnan V nt an : raph a B rn ns a.

3	**% ຂອງປະຊາກອນທີ່ຂາດການຄ້ຳປະກັນສະບຽງອາຫານ**	ພາຍໃນຕົວເລກສະຖິຕິແຫ່ງຊາດ, ບັນຫາຂາດການຄ້ຳປະກັນສະບຽງອາຫານ ແມ່ນຖືກກຳນົດຈາກສອງຕົວຊີ້ວັດຄື: % ຂອງລາຍໄດ້ຄົວເຮືອນທີ່ຈ່າຍຊື້ສະບຽງອາຫານ ແລະ % ຂອງປະຊາກອນທີ່ບໍລິໂພກສະບຽງອາຫານຕ່ຳກ່ວາລະດັບຕ່ຳສຸດຂອງການບໍລິໂພກສະບຽງອາຫານເພື່ອໃຫ້ພະລັງງານ. ບັນດາຂາດການຄ້ຳປະກັນສະບຽງອາຫານແລະຄວາມທຸກຍາກ ພົບວ່າ: ມີສາຍພົວພັນເຊິ່ງກັນແລະກັນຢ່າງສະໜິດແໜ້ນ[23]. ບັນຫາດັ່ງກ່າວເປັນທັງຜົນໄດ້ຮັບ ແລະ ໜ້າຈະເປັນທັງສາເຫດຂອງຄວາມທຸກຍາກ. ຄວາມເປັນໄປໄດ້ຂອງການບໍ່ມີສະບຽງອາຫານ ສ່ວນໜຶ່ງອາດຈະເປັນຍ້ອນບັນຫາການຂາດລາຍໄດ້ (ຄືດັ່ງທີ່ເກັບກຳໄວ້ໃນໜຶ່ງຈາກສອງຕົວຊີ້ວັດຂອງການຂາດການຄ້ຳປະກັນສະບຽງອາຫານ), ເນື້ອທີ່ດິນຜະລິດກະສິກຳບໍ່ພຽງພໍ ແລະ/ຫຼື ຜະລິດຕະພາບຕ່ຳຫຼາຍ ຫຼື ບັນຫາການຂາດການເຂົ້າເຖິງແຫຼ່ງສະບຽງອາຫານອື່ນໆ (ເຊັ່ນ: ປາ, ເຄື່ອງປ່າຂອງດົງ). ສາເຫດອື່ນທີ່ເປັນໄປໄດ້ສຳລັບບັນດາປັດໃຈເຫຼົ່ານີ້ ແມ່ນອາດຈະເປັນຍ້ອນການເຊື່ອມໂຊມຂອງຄຸນະພາບດິນ/ຄວາມອຸດົມສົມບູນຂອງດິນ, ບັນຫາການຫຼຸດລົງຂອງເນື້ອທີ່ດິນຜະລິດກະສິກຳ ອັນເປັນຍ້ອນການປ່ຽນຮູບແບບການນຳໃຊ້ທີ່ດິນໄປເຮັດຢ່າງອື່ນ ຫຼື ການສູນເສຍທີ່ຢູ່ອາໃສຕາມທຳມະຊາດທີ່ເປັນໂຕເກື້ອກູນປາ ຫຼື ເຄື່ອງປ່າຂອງດົງ. ການປ່ຽນແປງໃນທາງບວກ ເປັນສັນຍານເຕືອນໃຫ້ຮູ້ເຖິງການຫຼຸດລົງຂອງເນື້ອທີ່ດິນ ຫຼື ຜະລິດຕະພາບຂອງທີ່ດິນຜະລິດກະສິກຳ, ບັນຫາເຊື່ອມໂຊມລົງທີ່ເພີ່ມຂຶ້ນຂອງທີ່ຢູ່ອາໃສຕາມທຳມະຊາດ, ຄວາມກົດດັນດ້ານປະຊາກອນທີ່ເພີ່ມຂຶ້ນ, ແລະ/ຫຼື ບັນຫາຄວາມທຸກຍາກທີ່ເພີ່ມຂຶ້ນ. ການປ່ຽນແປງໃນທາງລົບ ຊີ້ໃຫ້ເຫັນເຖິງການເພີ່ມຂຶ້ນຂອງເນື້ອທີ່ດິນ ຫຼື ຜະລິດຕະພາບຂອງທີ່ດິນຜະລິດກະສິກຳ, ສະພາບທີ່ຢູ່ອາໃສຕາມທຳມະຊາດແລະຈຳນວນຊັບພະຍາກອນທີ່ໄດ້ຮັບການປັບປຸງດີຂຶ້ນ ແລະ/ຫຼື ການຫຼຸດລົງຂອງອັດຕາຄວາມທຸກຍາກ.	ຂໍ້ມູນຂ່າວສານດັ່ງກ່າວ ເນັ້ນໃຫ້ເຫັນເຖິງຄວາມຈຳເປັນຕ້ອງມີການວາງແຜນນຳໃຊ້ທີ່ດິນໃຫ້ດີຂຶ້ນກ່ວາເດີມ ເພື່ອຮັບປະກັນວ່າ: ມີທີ່ດິນຜະລິດກະສິກຳພຽງພໍ ໃນຂະນະທີ່ມີຄວາມຕ້ອງການຢາກໃຫ້ມີການພັດທະນາ ຫຼື ການລົງທຶນເພີ່ມຂຶ້ນ. ໃນກໍລະນີທີ່ມີອັດຕາບັນຫາການຂາດການຄ້ຳປະກັນສະບຽງອາຫານຢູ່ໃນລະດັບສູງ, ຄວນສະໜອງວຽກງານສິ່ງເສີມການຜະລິດກະສິກຳແບບມີເປົ້າໝາຍ (ຕົວຢ່າງ: ມາດຕະການສະຫງວນດິນປູກຝັງ, ເຕັກນິກການປູກ, ຄວາມຫຼາກຫຼາຍທາງສາຍພັນພືດປູກ) ເພື່ອປັບປຸງຜະລິດຕະພາບຂອງພືດປູກ ແລະ ເສີມສ້າງຄວາມເຂັ້ມແຂງໃຫ້ແກ່ຄວາມຍືດຍຸ່ນຕ້ານທານຂອງພືດປູກຕໍ່ທັງການປ່ຽນແປງຂອງສະພາບອາກາດ[24] ແລະ ການກະທົບຂອງຕະຫຼາດ (ຕົວຢ່າງ: ຜ່ານການຮັກສາຊີວະນາໆພັນທາງກະສິກຳ ແລະ ລະບົບການຜະລິດກະສິກຳແບບປະສົມປະສານ). ໃນເວລາດຽວກັນ, ຈຳເປັນຕ້ອງເອົາໃຈໃສ່ເພີ່ມຕໍ່ການຄຸ້ມຄອງທີ່ຢູ່ອາໃສຕາມທຳມະຊາດເພື່ອຮັບປະກັນວ່າຈຳນວນຊັບພະຍາກອນທີ່ມີນັ້ນຍັງສືບຕໍ່ມີສະໜອງໃຫ້ແກ່ຄວາມຕ້ອງການຂອງຊຸມຊົນຕ່າງໆ.
4	**% ຂອງອຸດສາຫະກຳທີ່ນຳໃຊ້ເຕັກໂນໂລຊີສະອາດ**[25] (ໝາຍ	ຕົວຊີ້ວັດດັ່ງກ່າວນີ້ ສະແດງໃຫ້ຮູ້ເຖິງຂອບເຂດທີ່ອຸດສາຫາກຳຕ່າງໆຢູ່ ສປປ ລາວ ນຳໃຊ້ເຕັກໂນໂລຊີສະອາດໃນການຊົມໃຊ້ພະລັງງານ, ການຄຸ້ມຄອງສິ່ງເສດເຫຼືອ ແລະ ການຜະລິດທີ່ມີປະສິດທິພາບ. ການລົງທຶນທີ່ສະແດງໃຫ້ເຫັນ	ຂໍ້ມູນຂ່າວສານດັ່ງກ່າວນີ້ ຈະສະໜອງໂຕຊີ້ວັດຄຸນະພາບຂອງການລົງທຶນທີ່ໄຫຼເຂົ້າມາໃນປະເທດ. ລະດັບຄາດໝາຍທີ່ຕ້ອງການໃຫ້ມີການລົງທຶນຂອງພາກ

[23] ຜົນການສຶກສາຄວາມບໍ່ສາມາດປົກປ້ອງຕົນເອງໄດ້ແລະການວິເຄາະບັນຫາການຂາດການຄ້ຳປະກັນສະບຽງອາຫານ ຕາມທີ່ລາຍງານໄວ້ໃນ Eppr ht, M. ແລະອື່ນໆ 2008, *ພູມສາດຄວາມທຸກຍາກແລະຄວາມບໍ່ສະເໝີພາບຢູ່ ສປປ ລາວ*. ສູນຄວາມສາມາດຄົ້ນຄ້ວາວິໃຈເໜືອ-ໃຕ້ແຫ່ງຊາດສະວິດເຊີແລນ (N R), ມະຫາວິທະຍາໄລຍະເບີນ *(University of Bern)*, B rnan V nt an : raph a B rn ns a.

[24] WREA, 2010. ແຜນງານແຫ່ງຊາດເພື່ອການດັດປັບຕາມການປ່ຽນແປງຂອງສະພາບດິນຟ້າອາກາດ (NAPA)

[25] ເຕັກໂນໂລຊີສະອາດ ຖືກນິຍາມວ່າເປັນ "ເຕັກໂນໂລຊີທີ່ປັບປຸງຜົນການດຳເນີນງານ, ຜະລິດຕະພາບ ແລະ ປະສິດທິພາບ ໃນຂະນະທີ່ຫຼຸດຜ່ອນປັດໃຈນຳເຂົ້າ (ຊັບພະຍາກອນ), ການຊົມໃຊ້ພະລັງງານ, ສິ່ງເສດເຫຼືອ (ຂີ້ເຫຍື່ອ) ຫຼື ມົນລະພິດ" (W k p a)

	ເຖິງພະລັງງານທົດແທນເຊັ່ນ: ພະລັງງານແສງຕາເວັນ ແລະ ແກດສ໌ຊີວະພາບ ແລະ ການຄຸ້ມຄອງສິ່ງເສດເຫຼືອ ເຊັ່ນ: ການນຳເອົາມາໝູນໃຊ້ໃໝ່)	ແບບວິທີປະຕິບັດທີ່ຍືນຍົງເຫຼົ່ານີ້ ຄາດວ່າຈະສົ່ງຜົນກະທົບໜ້ອຍຕໍ່ສິ່ງແວດລ້ອມ ແລະ ອາດຈະປະກອບສ່ວນເຂົ້າໃນຄວາມພະຍາຍາມບັນເທົາບັນຫາການປ່ຽນແປງຂອງສະພາບດິນຟ້າອາກາດ ທີ່ໄດ້ສົ່ງຜົນກະທົບຕໍ່ຄົນທຸກໃນລັກສະນະທີ່ບໍ່ສົມສ່ວນ. ການປ່ຽນແປງໃນທາງບວກ ຊີ້ໃຫ້ເຫັນການເພີ່ມຂຶ້ນຂອງຈຳນວນການລົງທຶນ ແລະອຸດສາຫະກຳທີ່ສະອາດຢູ່ພາຍໃນປະເທດ[26] ເຊິ່ງສາມາດນຳໄປສູ່ການຊົມໃຊ້/ຄວາມຕ້ອງການພະລັງງານ ແລະ ການສ້າງຂີ້ເຫຍື່ອທີ່ຫຼຸດລົງ. ການປ່ຽນແປງໃນທາງບວກເຫຼົ່ານີ້ ຍັງສະແດງໃຫ້ເຫັນເຖິງທ່າອ່ຽງເພື່ອກ້າວໄປສູ່ຄວາມຍືນຍົງໃນໄລຍະຍາວ. ການປ່ຽນແປງໃນທາງລົບ ຊີ້ໃຫ້ເຫັນການຫຼຸດລົງໃນສັດສ່ວນຂອງອຸດສາຫະກຳ ແລະການລົງທຶນຕ່າງໆທີ່ນຳໃຊ້ເຕັກໂນໂລຊີສະອາດ, ດັ່ງນັ້ນຈຶ່ງເປັນການເພີ່ມຄວາມກົດດັນຕໍ່ສິ່ງແວດລ້ອມ.	ເອກະຊົນຢູ່ໃນລະດັບສູງໃນໄລຍະ 5 ປີຂ້າງໜ້າ ອາດຈະມີຜົນກະທົບໃຫຍ່ຫຼວງຕໍ່ສຸຂະພາບຂອງສິ່ງແວດລ້ອມ ຖ້າຫາກບໍ່ມີການກຳນົດໃຫ້ມີເງື່ອນໄຂຄັດເລືອກ ແລະຄວາມນິຍົມຕໍ່ການລົງທຶນທີ່ໃຊ້ເຕັກໂນໂລຊີສະອາດເຂົ້າໄວ້ໃນລະບົບການອະນຸມັດ. ຈຳເປັນຕ້ອງມີມາດຕະການທາງນະ�โยบาย ແລະ ຂອບໃຫ້ສິ່ງຈູງใจ ເພື່ອຊຸກຍູ້ໃຫ້ມີການນຳໃຊ້ເຕັກໂນໂລຊີເຫຼົ່ານີ້ໃຫ້ຫຼາຍຂຶ້ນກ່ວາເດີມ. ສຳຄັນຍິ່ງຍວດອີກຢ່າງ, ໂຕຊີ້ວັດດັ່ງກ່າວນີ້ ຍັງສາມາດປະກອບສ່ວນເຂົ້າໃນການວັດແທກການປະກອບສ່ວນຂອງການລົງທຶນທີ່ມີຄຸນນະພາບເຂົ້າໃນການບັນລຸເປົ້າໝາຍພັດທະນາແບບຍືນຍົງ.
5	**% ຂອງປະຊາກອນ ທຸກຍາກໄດ້ຮັບຜົນກະທົບ ຫຼື ດຳລົງຊີວິດຢູ່ໃນເຂດທີ່ມີຄວາມສ່ຽງສູງທາງດ້ານສິ່ງແວດລ້ອມ**	ຕົວຊີ້ວັດດັ່ງກ່າວ ອະທິບາຍຄວາມໜ້າແໜ້ນ/ອັດຕາຂອງຄົນທຸກທີ່ດຳລົງຊີວິດຢູ່ໃນເຂດທີ່ດິນທີ່ລະອຽດອ່ອນ ຫຼື ສ່ຽງທາງສິ່ງແວດລ້ອມ ໝາຍວ່າ: ເປັນເຂດດິນທີ່ສ່ຽງຕໍ່ການເຊື່ອມ�โຊມທາງສິ່ງແວດລ້ອມ ດ້ວຍເຫດນັ້ນຕົວຊີ້ວັດດັ່ງກ່າວ ຈຶ່ງເນັ້ນໃຫ້ເຫັນເຖິງຄວາມບໍ່ສາມາດປົກປ້ອງຕົນເອງໄດ້ຂອງປະເພດການຫາລ້ຽງຊີບທີ່ເອື່ອຍອີງໃສ່ຊັບພະຍາກອນທຳມະຊາດ. ການປ່ຽນແປງໃນທາງບວກຂອງຕົວຊີ້ວັດດັ່ງກ່າວຕາມໄລຍະເວລາ ອາດຈະເປັນສັນຍານເຕືອນໃຫ້ຮູ້ເຖິງການເພີ່ມຂຶ້ນດ້ານຈຳນວນຂອງຄົນທຸກຜູ້ທີ່ຖືກຍູ້ດັນໃຫ້ຕ້ອງໄປດຳລົງຊີວິດຢູ່ຕາມເຂດທີ່ມີຄວາມສ່ຽງທາງສິ່ງແວດລ້ອມ; ຫຼື ການຂະຫຍາຍຕົວຂອງເຂດທີ່ຖືກຈັດວ່າເປັນເຂດທີ່ມີຄວາມສ່ຽງທາງສິ່ງແວດລ້ອມ ເນື່ອງຈາກບັນຫາການເຊື່ອມ�โຊມຕໍ່ເນື່ອງ. ການປ່ຽນແປງໃນທາງລົບ ຊີ້ໃຫ້ເຫັນເຖິງການຫຼຸດລົງຂອງຈຳນວນຄົນທຸກທີ່ດຳລົງຊີວິດຢູ່ຕາມເຂດດັ່ງກ່າວ; ຫຼື ການຫຼຸດລົງຂອງເຂດທີ່ຖືກຈັດວ່າເປັນເຂດທີ່ມີຄວາມສ່ຽງທາງສິ່ງແວດລ້ອມ ອັນເນື່ອງມາຈາກການມີຄວາມພະຍາຍາມຄຸ້ມຄອງທີ່ດິນ ຫຼື ປັບປຸງທີ່ດິນໃຫ້ດີຂຶ້ນກ່ວາເດີມ.	ຂໍ້ມູນຂ່າວສານດັ່ງກ່າວນີ້ ໄດ້ເນັ້ນໃຫ້ເຫັນເຖິງຄວາມຈຳເປັນຕ້ອງເລັ່ງເປົ້າໝາຍໃສ່ການສ້າງຜະລິດຕະພາບທາງກະສິກຳ, ມາດຕະການພັດທະນາຊົນນະບົດ, ຄວາມພະຍາຍາມຫຼຸດຜ່ອນຄວາມທຸກຍາກ, ແລະ/ຫຼື ການມີແບບວິທີປະຕິບັດດ້ານການສະຫງວນ ແລະ ຄຸ້ມຄອງຊັບພະຍາກອນ ໃຫ້ດີຂຶ້ນກ່ວາເດີມ, ນອກຈາກນັ້ນ, ຕົວຊີ້ວັດດັ່ງກ່າວ ຍັງເນັ້ນໃຫ້ເຫັນຄວາມຈຳເປັນຕ້ອງມີການວາງແຜນນຳໃຊ້ທີ່ດິນໃຫ້ດີຂຶ້ນກ່ວາເດີມ ເພື່ອຮັບປະກັນໃຫ້ມີທີ່ຕັ້ງທີ່ເໝາະສົມສຳລັບການລົງທຶນ ໂດຍທີ່ບໍ່ໄປເຮັດໃຫ້ອັດຕາການເຊື່ອມ�โຊມເຮັ່ງຮ້າຍໄປໄວຂຶ້ນ.

[26] ໂຕຊີ້ວັດດັ່ງກ່າວນີ້ ຈະຊ່ວຍເກັບກຳຄວາມຄືບໜ້າໃນການເຮັດບັນລຸໄດ້ຕາມເປົ້າໝາຍ*ຂອງຍຸດທະສາດລົງທຶນແຫ່ງຊາດ* ເຊິ່ງປະຈຸບັນນີ້ກຳລັງຖືກສ້າງຂຶ້ນພາຍໃຕ້ການຊີ້ນຳຂອງກົມສົ່ງເສີມການລົງທຶນ - ກະຊວງແຜນການແລະການລົງທຶນ: "*ເພີ່ມສັດສ່ວນຂອງການລົງທຶນທີ່ມີຄຸນນະພາບ ຫຼື ໃຊ້ເຕັກໂນ�โລຊີທີ່ສະອາດ ໃນສປປ ລາວ ໂດຍເປັນການລົງທຶນທີ່ຊ່ວຍຫຼຸດຜ່ອນຄວາມທຸກຍາກ, ເສີມຂະຫຍາຍການພັດທະນາທຶນມະນຸດ ຫຼື ຊັບພະຍາກອນມະນຸດ ແລະ ສົ່ງຜົນກະທົບໜ້ອຍສຸດຕໍ່ສິ່ງແວດລ້ອມ*"

5. ພາກສະຫຼຸບ

ກຸ່ມຕົວຊີ້ວັດ PE ທີ່ສະເໜີໃນທີ່ນີ້ ແມ່ນຈະຊ່ວຍເກັບກຳມິຕິດ້ານຄວາມທຸກຍາກແລະສິ່ງແວດລ້ອມໃນລັກສະນະສະເພາະທີ່ມີຄວາມສອດຄ່ອງສູງທາງດ້ານສະພາບເງື່ອນໄຂຕົວຈິງແລະນະໂຍບາຍຕໍ່ ສປປ ລາວ. ພວກເຮົາ ໄດ້ລວມເອົາບັນດາບົດຮຽນທີ່ຖອດຖອນໄດ້ຈາກຄວາມພະຍາຍາມໃນໄລຍະຜ່ານມາ ເພື່ອສ້າງບັນດາຕົວຊີ້ວັດ PE ແລະ ພະຍາຍາມຮັບປະກັນວ່າ: ກຸ່ມຕົວຊີ້ວັດດັ່ງກ່າວ ຈະ) ແກ້ໄຂທັງບັນຫາດ້ານຄວາມທຸກຍາກ ແລະສິ່ງແວດລ້ອມໃນລັກສະນະປະສົມປະສານ ( ) ( ) ( )

PEI ແມ່ນຫຍັງ?

ອົງການສະຫະປະຊາຊາດເພື່ອການພັດທະນາ (UNDP) ແລະ ອົງການສະຫະປະຊາຊາດເພື່ອສິ່ງແວດລ້ອມ (UNEP) ໄດ້ໃຫ້ການຊ່ວຍເຫຼືອແກ່ໂຄງການເຊື່ອມໂຍງວຽກງານສິ່ງແວດລ້ອມເຂົ້າໃນກົດຈະກຳຫຼຸດຜ່ອນຄວາມທຸກຍາກ (PEI) ເຊິ່ງເປັນໂຄງການທີ່ມີເປົ້າໝາຍເລັງໃສ່ເຊື່ອມໂຍງບັນຫາຫຼຸດ ຜ່ອນຄວາມທຸກຍາກແລະບັນຫາທາງສິ່ງແວດລ້ອມເຂົ້າໃນຂະບວນການວາງແຜນແລະພັດທະນາແຫ່ງຊາດ. ຈຸດປະສົງຂອງໂຄງການ PEI ຢູ່ ສປປ ລາວ ແມ່ນເພື່ອຮັບປະກັນວ່າ: ການເຕີບໂຕທາງເສດຖະກິດທີ່ວ່ອງໄວຂອງປະເທດ ຈະຊ່ວຍສ້າງໃຫ້ມີການພັດທະນາທີ່ຮອບດ້ານແລະຍືນຍົງ. ໂຄງການ PEI ຊ່ວຍເສີມສ້າງຄວາມເຂັ້ມແຂງໃຫ້ແກ່ຄວາມສາມາດທາງສະຖາບັນໃນດ້ານການວາງແຜນພັດທະນາແຫ່ງຊາດ ແລະ ການຄຸ້ມຄອງການລົງທຶນພາກເອກະຊົນ, ການພັດທະນາຄູ່ມືປະເມີນຜົນກະທົບທາງສັງ ຄົມແລະສິ່ງແວດລ້ອມ, ແລະ ການສ້າງໃຫ້ມີການຄົ້ນຄ້ວາວິໃຈແບບເນັ້ນໃສ່ຫຼັກຖານຕົວຈິງເພື່ອສຶກສາເບິ່ງຜົນເສຍຫາຍທາງສັງຄົມແລະສິ່ງແວດລ້ອມທີ່ເກີດຈາກການຕັດສິນບັນຫາກ່ຽວກັບການນຳໃຊ້ທີ່ດິນ. ໂຄງການດັ່ງກ່າວ ແມ່ນຢູ່ພາຍໃຕ້ການປະສານງານຂອງກະຊວງແຜນ ການແລະການລົງທຶນ ໂດຍບັນດາອົງປະກອບຕ່າງໆຂອງໂຄງ ການແມ່ນຢູ່ພາຍໃຕ້ການຄຸ້ມຄອງຂອງກົມແຜນການ, ກົມສົ່ງເສີມການລົງທຶນ, ສະຖາບັນຄົ້ນຄ້ວາເສດຖະກິດແຫ່ງຊາດ ແລະ ອົງການຊັບພະຍາກອນນ້ຳແລະສິ່ງແວດລ້ອມ.

www.unpei.org/programmes/country_profiles/lao-pdr.asp

ຖ້າຕ້ອງການລາຍລະອຽດເພີ່ມເຕີມ, ສາມາດຕິດຕໍ່ໂຄງການ PEI ຢູ່ ສປປ ລາວໄດ້ທີ່:
pei.lao@undp.org

ການປະກອບຄຳຄິດຄຳເຫັນ ທີ່ບັນລະຍາຍຢູ່ໃນສືພິມນີ້ ແມ່ນເປັນຂອງຜູ້ຂຽນ ຊຶ່ງບໍ່ກ່ຽວຂ້ອງກັບກະຊວງແຜນການ ແລະ ການລົງທຶນ ຢູ່ ສປປ ລາວ